LAOS: Decree on financial support to ~~Civil Servants taking~~ Their function/position administrative

Copy

ເລກທີ: 2009
ວັນທີ: 5/5/2010

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສຳນັກງານນາຍົກລັດຖະມົນຕີ

ເລກທີ 35/ນຍ

ນະຄອນຫລວງວຽງຈັນ, ວັນທີ 26-04-2010

## ຂໍ້ຕົກລົງ

## ຂອງນາຍົກລັດຖະມົນຕີ

## ວ່າດ້ວຍເງິນອຸດໜູນຕຳແໜ່ງບໍລິຫານຂອງລັດຖະກອນ

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ແຫ່ງ ສປປ. ລາວ ສະບັບເລກທີ 02/ສພຊ, ລົງວັນທີ 6 ພຶດສະພາ 2003.
- ອີງຕາມ ດຳລັດນາຍົກລັດຖະມົນຕີ ສະບັບເລກທີ 82/ນຍ, ລົງວັນທີ 19 ພຶດສະພາ 2003 ວ່າດ້ວຍລະບຽບລັດຖະກອນແຫ່ງ ສປປ ລາວ.
- ອີງຕາມ ດຳລັດນາຍົກລັດຖະມົນຕີ ສະບັບເລກທີ 99/ນຍ, ລົງວັນທີ 23 ກໍລະກົດ 2008 ວ່າດ້ວຍຕຳແໜ່ງບໍລິຫານຂອງລັດຖະກອນແຫ່ງ ສປປ ລາວ.
- ອີງຕາມການສະເໜີຂອງ ຫົວໜ້າທະບວງການປົກຄອງ ແລະ ຄຸ້ມຄອງລັດຖະກອນ ສະບັບເລກທີ 52/ທປຄ ລົງວັນທີ 20 ເມສາ 2010.

## ນາຍົກລັດຖະມົນຕີ ແຫ່ງ ສປປ. ລາວ

## ຕົກລົງ

ມາດຕາ 1. ເພີ່ມ ອຸດໜູນເງິນຕຳແໜ່ງບໍລິຫານ 8 ປະເພດຂອງລັດຖະກອນ ດັ່ງນີ້:

- ຕຳແໜ່ງບໍລິຫານປະເພດ 1: ອຸດໜູນ 170.000 ກີບ/ເດືອນ = 35,000
- ຕຳແໜ່ງບໍລິຫານປະເພດ 2: ອຸດໜູນ 120.000 ກີບ/ເດືອນ = 25,000
- ຕຳແໜ່ງບໍລິຫານປະເພດ 3: ອຸດໜູນ 100.000 ກີບ/ເດືອນ = 19,000
- ຕຳແໜ່ງບໍລິຫານປະເພດ 4: ອຸດໜູນ 70.000 ກີບ/ເດືອນ = 14,000
- ຕຳແໜ່ງບໍລິຫານປະເພດ 5: ອຸດໜູນ 50.000 ກີບ/ເດືອນ = 10,000
- ຕຳແໜ່ງບໍລິຫານປະເພດ 6: ອຸດໜູນ 30.000 ກີບ/ເດືອນ = 4,000
- ຕຳແໜ່ງບໍລິຫານປະເພດ 7: ອຸດໜູນ 20.000 ກີບ/ເດືອນ = 3,000
- ຕຳແໜ່ງບໍລິຫານປະເພດ 8: ອຸດໜູນ 15.000 ກີບ/ເດືອນ = 5,000

ມາດຕາ 2. ມອບໃຫ້ ກະຊວງການເງິນ ຄົ້ນຄວ້າຄິດໄລ່ຂຶ້ນແຜນງົບປະມານປະຈຳປີ 2010 - 2011 ໃຫ້ເລີ່ມປະຕິບັດແຕ່ງວດ I ຂອງສົກປີ 2010-2011 ເປັນຕົ້ນໄປ, ໃຫ້ກະຊວງແຜນການ ແລະ ການລົງທຶນ ເອົາເຂົ້າແຜນງົບປະມານຂອງສົກປີ 2010-2011 ແລະ ແຜນພັດທະນາເສດຖະກິດ- ສັງຄົມ ຄັ້ງທີ 7 ຂອງລັດຖະບານ.

ມາດຕາ 3. ມອບໃຫ້ ກະຊວງການປົກຄອງ ແລະ ຄຸ້ມຄອງລັດຖະກອນ ຂຶ້ນບັນຊີຈຳນວນແຕ່ລະຕຳແໜ່ງໃນແຕ່ລະໄລຍະເພື່ອຈັດຕັ້ງປະຕິບັດຢ່າງເໝາະສົມ.

ມາດຕາ 4. ຂໍ້ດຳລັດສະບັບນີ້ ໃຊ້ປ່ຽນແທນມາດຕາ 5 ຂອງຂໍ້ດຳລັດສະບັບເລກທີ 88/ນຍ, ລົງວັນທີ 11 ກັນຍາ 2008 ວ່າດ້ວຍການປັບປຸງມູນຄ່າດັດສະນີເງິນເດືອນພື້ນຖານ, ເງິນອຸດໜູນ ແລະ ເງິນເບ້ຍລ້ຽງທີ່ນຳໃຊ້ງົບປະມານແຫ່ງລັດ ແລະ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ນາຍົກລັດຖະມົນຕີ ແຫ່ງ ສປປ. ລາວ

ບົວສອນ ບຸບຜາວັນ